ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 2125 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2019

# ໜັງສືແຈ້ງເຊີນປະມູນ

1. ກະຊວງການເງິນ, ຫ້ອງການກະຊວງ ຈະໄດ້ດຳເນີນການຈັດຊື້-ຈັດຈ້າງ ບໍລິສັດ ມາອອກແບບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພຂໍ້ມູນ ລວມສູນຂອງກະຊວງການເງິນ ໂດຍນຳໃຊ້ງົບປະມານ ບ້ວງທຶນເປັນທຶນສະໄໝຂອງກະຊວງການເງິນ ປີ 2019 ດ້ວຍການປະມູນ ເປີດກວ້າງ.
2. ຫ້ອງການກະຊວງການເງິນ ຂໍເຊີນບັນດາ ບໍລິສັດ/ວິສາຫະກິດ ທີ່ສົນໃຈ ທີ່ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນສຳລັບອອກແບບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພຂໍ້ມູນ.
3. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/-ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດ/ວິສາຫະກິດ ທີ່ມີຄຸນວຸດທິ ແລະ ຄວາມເໝາະສົມ, ມີໃບອະນຸຍາດດຳເນີນ ທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບການພັດທະນາລະບົບໄອຊີທີ (ICT) ແລະ ໜັງສືຢັ້ງຢືນການເສຍອາກອນ ປະຈຳປີ 2018 ແລະ 2019.
5. ບໍລິສັດ ທີ່ມີຄຸນນະວຸດທິ ແລະ ມີຄວາມເໝາະສົມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ກະຊວງການເງິນ, ໂທ: 021 417766/020, 58892975. ແລະ ກວດກາເບິ່ງ ເອກະສານປະມູນ ໃນເວລາເຮັດວຽກທາງລັດຖະການ.
6. ເລີ່ມຂາຍຊອງແຕ່ວັນທີ 6/9/2019 ຫາ 8/10/2019, ເວລາປິດຮັບເອກະສານ 13:00 ໂມງ, ຊອງເອກະສານຂາຍໃນລາຄາ 1.000.000 ກີບ (ໜຶ່ງລ້ານກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການ ສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ (ເງິນສົດ).

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ